NSW GOVERNMENT | Health

*ເຈັ້ຍຂໍ້ມູນກ່ຽວກັບພະຍາດຕິດຕໍ່*

# ໂຣກຫັດ

*ໂຣກຫັດແມ່ນພະຍາດຮ້າຍແຮງຊະນິດນຶ່ງ ຊຶ່ງແຜ່ຜາຍໄດ້ໂດຍງ່າຍທາງອາກາດ. ການສັກຢາປ້ອງກັນແມ່ນວິທີທີ່ໄດ້ຜົນໃນການປ້ອງກັນໂຣກນີ້. ເດັກນ້ອຍແລະຜູ້ໃຫຍ່ທຸກຄົນທີ່ເກີດເມື່ອປີ* ***1966*** *ຫຼື ຫຼັງ ຈາກນັ້ນຕ້ອງສັກຢາ ວັກຊີນ* ***MMR*** *ສອງ ຄັ້ງຖ້າວ່າຍັງບໍ່ທັນມີພູມຕ້ານທານເທື່ອ.*

## ໂຣກຫັດແມ່ນຫຍັງ?

ໂຣກຫັດແມ່ນໂຣກຈາກໄວຣັສຊະນິດນຶ່ງຊຶ່ງອາດເຮັດໃຫ້ໂຣກແຊກຊ້ອນທີ່ຮ້າຍແຮງໄດ້. ໃນອະດີດ, ມີເດັກນ້ອຍເປັນ ໂຣກຫັດກັນຢ່າງ ແຜ່ຫຼາຍ. ປັດຈຸບັນນັ້ນ ຄົນທີ່ເປັນໂຣກຫັດໃນຣັດ ນຊວ ມີນ້ອຍທີ່ສຸດເພາະວ່າໄດ້ການສັກຢາປ້ອງກັນ.

## ໂຣກນີ້ມີອາການຫຍັງແດ່?

- ອາການແຕ່ຕົ້ນໆແມ່ນ ເປັນໄຂ້, ເມື່ອຍອ່ອນເພັຍ, ໄອ, ຂີ້ມູກຍ້ອຍ, ຕາເຈັບແລະແດງ ແລະຮູ້ສຶກບໍ່ສະບາຍ. ສອງສາມມື້ຕໍ່ມາ ຜື່ນກໍຈະປາກົດຂຶ້ນ. ຜື່ນຈະເລີ້ມຂຶ້ນທີ່ໃບໜ້າກ່ອນ ແລ້ວຈະລາມໄປຕາມຮ່າງກາຍແລະເປັນຢູ່ ລະຫວ່າງ 4-7 ມື້.
- ຈຳນວນຮອດນຶ່ງສ່ວນສາມຂອງຄົນທີ່ເປັນໂຣກຫັດຈະມີອາການແຊກຊ້ອນ. ອາການດັ່ງກ່າວຮວມມີການຕິດເຊື້ອທີ່ຫູ, ຖອກທ້ອງ ແລະ ປອດບວມ, ແລະອາດຕ້ອງໄດ້ນອນໂຮງໝໍ. ປະມານນຶ່ງໃນທຸກໆ 1000 ຄົນທີ່ເປັນໂຣກຫັດ ຈະເປັນໂຣກສມອງອັກເສບ (ສມອງບວມ).

## ໂຣກນີ້ແຜ່ຜາຍໄດ້ຢ່າງໃດ?

- ຕາມປົກກະຕິ ໂຣກຫັດຈະແຜ່ຜາຍ ເມື່ອຄົນຜູ້ນຶ່ງຫາຍໃຈເອົາເຊື້ອໄວຣັສໂຣກຫັດຈາກການໄອຫຼືຈາມຂອງຄົນທີ່ມີເຊື້ອ. ໂຣກຫັດແມ່ນນຶ່ງໃນຈຳພວກໂຣກທີ່ແຜ່ຜາຍກັນໄດ້ງ່າຍທີ່ສຸດໃນການຕິດເຊື້ອຂອງມວນມະນຸດ. ພຽງແຕ່ເຮົາຢູ່ໃນຫ້ອງດຽວ ກັບຄົນທີ່ເປັນໂຣກຫັດກໍອາດເຮັດໃຫ້ເຮົາຕິດໂຣກໄດ້.

- ຄົນທີ່ເປັນໂຣກຫັດສ່ວນຫຼາຍແມ່ນຕິດເຊື້ອ ພໍດີ ກ່ອນອາການເລີ້ມຕົ້ນຈົນເຖິງສີ່ມື້ຫຼັງຈາກຜື່ນປາກົດຂຶ້ນ. ຈາກຊ່ວງລະຍະ ຕອນຄົນເລີ້ມໄດ້ຮັບເຊື້ອມາເຖິງຕອນເຈັບປ່ວຍປົກກະຕິແມ່ນປະມານ10ມື້. ສ່ວນຫຼາຍຜື່ນຈະປາກົດຢູ່ປະມານ 14 ມື້ຫຼັງຈາກໄດ້ຮັບເຊື້ອ.

## ແມ່ນໃຜແດ່ສ່ຽງຕໍ່ການຕິດເຊື້ອໂຣກນີ້?

ໂຣກຫັດເປັນກັນຫຼາຍກ່ອນ ປີ 1966, ເພາະສະນັ້ນ ຄົນທີ່ເກີດກ່ອນນັ້ນແມ່ນມີພູມຕ້ານທານແລ້ວ. ຄົນທີ່ສ່ຽງຕໍ່ການຕິດເຊື້ອຮວມມີ:

- ຄົນທີ່ເກີດລະຫວ່າງປີ1966 ຫຼືຫຼັງຈາກນັ້ນແລະຜູ້ມີບໍ່ໄດ້ສັກຢາວັກຊີນ ກັນ ໂຣກຫັດ- ໂຣກໝາກເບີດ- ໂຣກຣູແບລລ້າ (MMR) ສອງຄັ້ງຈາກອາຍຸ 12 ເດືອນ.
- ຄົນທີ່ມີລະບົບພູມຕ້ານທານອ່ອນແອ (ເຊັ່ນຜູ້ທີ່ເຮັດການປິ່ວມະເຮັງແບບຄີໂມ chemotherapy ຫຼື ປົວແບບສາຍແສງ radiotherapy ຫຼືຜູ້ທີ່ກິນຢາສະເຕຣອຍແບບແຮງ) ເຖິງແມ່ນວ່າເຂົາເຈົ້າຈະເຄີຍສັກຢາປ້ອງກັນເຕັມສ່ວນ ຫຼື ເຄີຍເປັນ ໂຣກຫັດມາກ່ອນກໍຕາມ.
- ຄົນທີ່ບໍ່ໄດ້ສັກຢາກັນແລະເດີນທາງໄປຕ່າງປະເທດ.

## ຈະປ້ອງກັນໂຣກນີ້ໄດ້ຢ່າງໃດ?

- ການປ້ອງກັນໂຣກຫັດທີ່ດີທີ່ສຸດກໍຄື ສັກຢາວັກຊີນ MMR ປ້ອງກັນສອງຄັ້ງ. ຢາວັກຊີນນີ້ຊ່ວຍປ້ອງກັນການຕິດໂຣກຫັດ, ໃນຂນະດຽວກັນກໍຊ່ວຍປ້ອງກັນໂຣກໝາກເບີດແລະໂຣກຣູແບລລ້າດ້ວຍ.
- ຢາວັກຊີນ MMR ຄວນສັກໃຫ້ເດັກນ້ອຍຕອນອາຍຸ 12 ເດືອນແລະສັກອີກເທື່ອທີສອງເມື່ອອາຍຸ 4 ປີ.
- ຄົນໃດທີ່ເກີດລະຫວ່າງປີ 1966 ຫຼືຫຼັງຈາກນັ້ນ ແລະ ບໍ່ເຄີຍເປັນໂຣກຫັດມາກ່ອນ ຫຼື ບໍ່ເຄີຍສັກຢາວັກຊີນ MMR ມາກ່ອນ ຕ້ອງໄດ້ສັກຢາວັກຊີນ MMR ສອງຄັ້ງ ຢ່າງນ້ອຍ ຫ່າງກັນ ສີ່ອາທິດ.
- ເປັນການປອດພັຍທີ່ຈະສັກຢາວັກຊີນເກີນສອງຄັ້ງ, ເພາະສະນັ້ນຜູ້ທີ່ບໍ່ໝັ້ນໃຈຄວນໄປສັກເພື່ອໄວ້.
- ຄົນທີ່ເປັນໂຣກຫັດຄວນຢູ່ບ້ານ ຈົນກວ່າວ່າຕົນບໍ່ມີເຊື້ອແລ້ວ (ໝາຍເຖິງວ່າ ຈົນກວ່າຮອດ 4 ມື້ຫຼັງຈາກຜື່ນ ເລີ້ມອອກ)
- ສຳລັບຄົນທີ່ບໍ່ໄດ້ສັກຢາປ້ອງກັນມາກ່ອນແລະໄດ້ພົວພັນກັບຄົນທີ່ເປັນໂຣກຫັດ, ບາງເທື່ອກໍຍັງສາມາດປ້ອງ ກັນການຕິດເຊື້ອໄດ້ດ້ວຍການສັກຢາວັກຊີນ MMR ຖ້າວ່າສັກພາຍໃນ 3 ມື້ຫຼັງຈາກໄດ້ຮັບເຊື້ອ ຫຼື ໃຫ້ immunoglobulin ພາຍໃນ 7 ມື້ຫຼັງຈາກໄດ້ຮັບເຊື້ອ.

## ຈະກວດຫາພະຍາດນີ້ໄດ້ຢ່າງໃດ?

- ຄວນສົງສັຍວ່າແມ່ນໂຣກຫັດຖ້າຄົນຜູ້ນຶ່ງຮູ້ສຶກບໍ່ສະບາຍ, ເປັນໄອ, ຂີ້ມູກຍ້ອຍ ຫຼື ເຈັບຕາ ແລະ ເປັນໄຂ້ ຕິດຕາມດ້ວຍການເປັນຜື່ນ.
- ຍາມໃດທີ່ມີການສົງສັຍວ່າເປັນໂຣກຫັດ, ຄວນກວດເລືອດແລະຄວນເອົາຕົວຢ່າງຈາກດັງ, ຮູຄໍ ແລະ ປັດສະວະ ເພື່ອຢັ້ງຢືນວ່າແມ່ນພະຍາດນີ້. ການຢັ້ງຢືນພະຍາດເປັນສິ່ງສຳຄັນເພາະວ່າທາງການສາທາຣະນະສຸກ ຈະໄດ້ຕິດຕາມເບິ່ງຄົນອື່ນໆທີ່ອາ ດສ່ຽງຕໍ່ການຕິດໂຣກຫັດນີ້. .

## ຈະປິ່ນປົວໂຣກນີ້ໄດ້ຢ່າງໃດ?

- ຕາມປົກກະຕິ ທ່ານໝໍຈະແນະນຳໃຫ້ຄົນທີ່ເປັນໂຣກຫັດພັກຜ່ອນ, ດື່ມນ້ຳຫຼາຍໆ, ແລະກິນຢາ paracetamol ເພື່ອປົວອາການໄຂ້. ບໍ່ມີການປິ່ນປົວສະເພາະສຳລັບໂຣກນີ້.
- ໃນລະຫວ່າງທີ່ຄົນຜູ້ນຶ່ງເປັນໂຣກຫັດ ເປັນສິ່ງສຳຄັນທີ່ລາວຕ້ອງຢູ່ເຮືອນ ເພື່ອຫຼຸດຜ່ອນການແຜ່ພາຍເຊື້ອໂຣກໄປໃຫ້ຄົນອື່ນ.

## ພແນກສາທາຣະນະສຸກມີທ່າທີຢ່າງໃດຕໍ່ໂຣກນີ້?

ທ່ານໝໍ, ໂຮງໝໍ, ຫ້ອງທົດລອງ, ໂຮງຮຽນແລະສູນຝາກເດັກຕ້ອງລາຍງານກໍຣະນີຂອງໂຣກຫັດໃຫ້ທາງໜ່ວຍສາທາຣະນະສຸກຊາບ. ພະນັກງານຂອງໜ່ວຍສາທາຣະນະສຸກຈະສຳພາດທ່ານໝໍແລະຄົນເຈັບ (ຫຼືຜູ້ດູແລ) ເພື່ອໃຫ້ຮູ້ວ່າການຕິດເຊື້ອເກີດຂຶ້ນຢ່າງໃດ, ມີຄົນອື່ນຄົນໃດແດ່ທີ່ສ່ຽງຕໍ່ການຕິດເຊື້ອ, ນຳໃຊ້ມາດຕະການຄວບຄຸມ (ເຊັ່ນສັກຢາປ້ອງກັນ ແລະ ສັ່ງຫ້າມບໍ່ໃຫ້ໄປໂຮງຮຽນ ຫຼືໄປເຮັດວຽກ) ແລະໃຫ້ຄຳແນະນຳອັນຄວນ.

## ຖ້າຕ້ອງການຣາຍລະອຽດເພີ້ມເຕີມ

ເຈ້ຍຂໍ້ມູນ "ໂຣກຫັດ: ຣາຍລະອຽດສຳລັບຜູ້ພົວພັນ" ໄດ້ບັນຈຸຂໍ້ມູນຈຳເພາະສຳລັບຜູ້ທີ່ຕິດເຊື້ອໄວຣັສແລ້ວ. ເຂົ້າໄປເບິ່ງຣາຍລະອຽດໄດ້ທີ່:

http://www.health.nsw.gov.au/resources/publichealth/infectious/diseases/measles_contact_factsheet_pdf.asp

**ຣາຍລະອຽດເພີ້ມເຕີມ - ພແນກສາທາຣະນະສຸກແຫ່ງຣັດ NSW**



**1300 066 055** **www.health.nsw.gov.au**